**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ໂຍທາທິການ ແລະຂົນສົ່ງ

ເລກທີ________/ ຍທຂ

ນະຄອນຫລວງວຽງຈັນ,ວັນທີ__________

# ຮ່າງ

# ຂໍ້ຕົກລົງ

# ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກອງກວດກາ ໂຍທາທິການ ແລະ ຂົນສົ່ງທາງບົກ

- ອີງຕາມກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ (ສະບັບປັບປຸງ) ເລກທີ 24/ສພຊ,ລົງວັນທີ 12 ທັນວາ 2012
- ອີງຕາມກົດໝາຍວ່າດ້ວຍ ການຈະລາຈອນທາງບົກ (ສະບັບປັບປຸງ) ເລກທີ 23/ສພຊ,ລົງວັນທີ12 ທັນວາ 2012
- ອີງຕາມ ກົດໝາຍວ່າດ້ວຍ ທາງຫຼວງ ເລກທີ 24/ສພຊ,ລົງວັນທີ12 ທັນວາ 2012
- ອີງຕາມກົດໝາຍ ເຄຫະຜັງເມືອງ ສະບັບເລກທີ 03/99/ສພຊ , ລົງວັນທີ 03/04/99.

## ລັດຖະມົນຕີວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ ອອກຂໍ້ຕົກລົງ

## <u>ໝວດທີ I</u>

## ບົດບັນຍັດທົ່ວໄປ

<u>ມາດຕາ 1:</u> **ຈຸດປະສົງ**

ຂໍ້ຕົກລົງ ສະບັບນີ້ວາງອອກ ເພື່ອກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະແບບແຜນວິທີເຮັດວຽກ ຂອງກອງກວດກາ ໂຍທາທິການ ແລະ ຂົນສົ່ງທາງບົກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກອງດັ່ງກ່າວ ມີໜ້າທີ່ຈັດຕັ້ງປະຕິບັດລະບຽບກົດໝາຍທີ່ກ່ຽວຂ້ອງ, ເຮັດໃຫ້ການຂົນສົ່ງທາງບົກ, ການຈະລາ

ຈອນທາງບົກ, ການປົກປັກຮັກສາທາງຫລວງ, ການຄຸ້ມຄອງການກໍ່ສ້າງ ແລະການປຸກສ້າງໃຫ້ຖືກຕ້ອງ ເພື່ອຮັບປະກັນໃຫ້ວຽກງານຂົນສົ່ງທາງບົກ, ຂົວ-ທາງ ແລະເຄຫາຜັງເມືອງ ໃຫ້ຄວາມສີວິໄລ, ມີຄວາມສະດວກ, ວ່ອງໄວ, ປອດໄພ, ເປັນລະບຽບຮຽບຮ້ອຍ ແລະຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 2: ທີ່ຕັ້ງ ແລະ ພາລະບົດບາດ**

ກອງກວດກາໂຍທາທິການ ແລະຂົນສົ່ງທາງບົກ ເປັນອົງການຈັດຕັ້ງ ທາງດ້ານວິຊາການ, ແບ່ງອອກເປັນສອງຂັ້ນຄື: ຂັ້ນສູນກາງ ແລະຂັ້ນທ້ອງຖິ່ນ.

- ກອງກວດກາໂຍທາທິການ ແລະຂົນສົ່ງທາງບົກ ຂັ້ນສູນກາງ ເປັນກອງວິຊາການຂັ້ນ I, ທຽບເທົ່າກັບກົມ ສັງກັດຢູ່ໃນໂຄງປະກອບການຈັດຕັ້ງຂອງກະຊວງໂຍທາທິການ ແລະຂົນສົ່ງ ຢູ່ພາຍໃຕ້ການຊີ້ນຳໂດຍກົງ ຂອງລັດຖະມົນຕີວ່າການ, ຊຶ່ງມີບົດບາດ ເປັນເສນາທິການໃຫ້ແກ່ກະຊວງ ໂຍທາທິການ ແລະ ຂົນສົ່ງ ໃນການຄຸ້ມຄອງມະຫາພາກ, ມີຊື່ຫຍໍ້ເປັນພາສາລາວວ່າ: " **ກຍຂບ** "; ເປັນພາສາອັງກິດວ່າ: " Authority of Public Works and Transport Inspection " ຊຽນຫຍໍ້ເປັນພາສາອັງກິດວ່າ: " APTI ".

- ຂະແໜງກວດກາ ໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນທ້ອງຖິ່ນ ສັງກັດຢູ່ໃນໂຄງປະກອບການຈັດຕັ້ງ ຂອງພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ ແລະ ນະຄອນຫລວງ ມີຖານະທຽບເທົ່າ ກັບຂະແໜງການອື່ນໆຂອງພະແນກ ຍທຂ, ຢູ່ພາຍໃຕ້ການຊີ້ນຳໂດຍກົງ ຂອງຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ , ມີຊື່ຫຍໍ້ເປັນພາສາລາວວ່າ " ຂຍຂບ "; ເປັນພາສາອັງກິດວ່າ " Sector of Public Works and Transport Inspection " ; ຊຽນຫຍໍ້ເປັນພາສາອັງກິດວ່າ: " SPTI ".

ກອງກວດກາໂຍທາທິການ ແລະຂົນສົ່ງທາງບົກ ຂັ້ນສູນກາງ ແລະ ຂະແໜງກວດກາໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນທ້ອງຖິ່ນ ມີພາລະບົດບາດໃນການດຳເນີນການຄຸ້ມຄອງ, ຄວບຄຸມ, ກວດກາການຂົນສົ່ງທາງບົກ , ກວດກາທາງຫລວງ , ການກໍ່ສ້າງ ແລະ ປຸກສ້າງ ທັງຢູ່ໃນ ແລະ ນອກຕົວເມືອງ ຫລື ເຂດເທດສະບານໃນຂອບເຂດທົ່ວປະເທດ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3: ໜ້າທີ່**

ກອງກວດກາ ໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນສູນກາງ ແລະ ຂະແໜງກວດກາໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນທ້ອງຖິ່ນ ມີໜ້າທີ່ຕົ້ນຕໍດັ່ງນີ້:

1. ຂື້ນແຜນການດຳເນີນງານໄລຍະຍາວ, ໄລຍະກາງ ແລະ ປະຈຳປີຂອງຕົນ ເພື່ອສະເໜີຂັ້ນເທິງພິ

ຈາລະຈອນທາງບົກ ພ້ອມສະຫລຸບ ສັງລວມທັງລາຍງານຜົນ ຂອງການຈັດຕັ້ງປະຕິບັດແຜນການ ແລະ ແຜນ ງານ ຂອງຕົນໃຫ້ຂັ້ນເທິງຮັບຊາບຕາມລະບຽບການ;

2. ຈັດຕັ້ງປະຕິບັດແຜນດຳເນີນງານ ດ້ານຄວາມປອດໄພທາງຖະໜົນ ເພື່ອອຳນວຍຄວາມສະດວກ ດ້ານການບໍລິການທາງຜ່ານ;
3. ສຶກສາອົບຮົມ ບຸກຄົນ ຫຼື ການຈັດຕັ້ງ ລວມທັງຜູ້ຂັບລົດວິສາຫະກິດຂົນສົ່ງ , ລົດຂົນສົ່ງສະເພາະ , ຜູ້ດຳເນີນທຸລະກິດການຂົນສົ່ງ ແລະ ເຈົ້າຂອງລົດຂົນສົ່ງສະເພາະທຸກປະເພດ, ເຈົ້າຂອງອາຄານ ສະຖານທີ່ ຫຼື ຜູ້ຮັບເໝົາກໍ່ສ້າງ ທີ່ຝ່າຝືນລະບຽບ ກົດໝາຍ ແລະ ສ້າງຄວາມສັບສົນ ແລະ ເປັນ ອຸປະສັກ ໃຫ້ແກ່ການຈະລາຈອນທາງບົກ ໃຫ້ເຂົາເຈົ້າມີຄວາມຮັບຮູ້, ເຂົ້າໃຈ ແລະເຊື່ອມຊຶມ ເພື່ອ ຈັດຕັ້ງປະຕິບັດລະບຽບ ກົດໝາຍດັ່ງກ່າວ ຢ່າງເຂັ້ມງວດ;
4. ກວດກາ ລົດວິສາຫະກິດຂົນສົ່ງ ສິນຄ້າ ແລະ ໂດຍສານ ແລະ ລົດຂົນສົ່ງສະເພາະ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຂົ້າມາເຄື່ອນໄຫວຢູ່ໃນ ສປປ ລາວ ດັ່ງນີ້:
    - ກວດກາເອກະສານ ປະຈຳລົດເຊັ່ນ : ໃບອະນຸຍາດດຳເນີນທຸລະກິດ , ປື້ມຕິດຕາມການແລ່ນ ລົດ, ໃບອະນຸຍາດແລ່ນລົດ , ໃບທະບຽນລົດ , ໃບກວດກາເຕັກນິກ , ໃບອະນຸຍາດຂັບຂີ່, ໃບຢັ້ງຢືນສຸຂະພາບຂອງຜູ້ຂັບຂີ່ ແລະ ຜູ້ຊ່ວຍ, ໃບເສຍຄ່າທາງ, ໃບປະກັນໄພທີ່ກ່ຽວຂ້ອງ, ສັນຍາຂົນສົ່ງ , ປື້ມອະນຸຍາດຂົນສົ່ງລະຫວ່າງປະເທດ ສຳລັບລົດຂົນສົ່ງຂ້າມແດນ , ຜ່ານແດນ ຕາມສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປລາວ ໄດ້ເຊັນກັບຕ່າງປະເທດ ແລະ ເອກະ ສານອື່ນໆ ທີ່ກ່ຽວຂ້ອງກັບວຽກງານການຂົນສົ່ງ;
    - ກວດກາທາດເຫລົ້າໃນເລືອດຂອງຜູ້ຂັບຂີ່;
    - ກວດກາສິນຄ້າ, ວັດຖຸເຄື່ອງຂອງ ຫລື ສັດ ຕາມໃບອະນຸຍາດ ແລະ ເອກະສານຕິດຕາມ ການ ຂົນສົ່ງ;
    - ຄວບຄຸມຄວາມໄວ, ສູງ, ຄວັນ, ນ້ຳໜັກ ແລະ ຂະໜາດການບັນທຸກສິນຄ້າ,ຈຳນວນຄົນ ຫລື ຜູ້ໂດຍສານ ທີ່ບັນຈຸຢູ່ໃນລົດຂົນສົ່ງທຸກປະເພດ ; ລວມທັງລົດຂົນສົ່ງໂດຍສານພາຍໃນປະເທດ ແລະ ລົດຂົນສົ່ງໂດຍສານລະຫວ່າງປະເທດ.
5. ກວດກາຢ່າງເປັນປົກກະຕິ ສະພາບຂອງເສັ້ນທາງ, ຖ້າເຫັນວ່າມີເສັ້ນທາງເປ່ເພ, ນ້ຳຖ້ວມທາງ, ດິນ ເຈື່ອນຖົມທາງ, ຕົ້ນໄມ້ຫັກຕັນທາງ, ມີສິ່ງກໍ່ສ້າງກີດຂວາງ, ກອງດິນ-ຫີນ-ຊາຍ ຫລື ມີການຕິດຕັ້ງ ເສົາ ແລະສາຍໄຟຟ້າ, ເສົາ ແລະສາຍໂທລະຄົມມະນາຄົມ, ປ້າຍໂຄສະນາ,ປ້າຍຄຳຂວັນ,ມີການ ຂຸດຮ່ອງ ຫລື ວາງທໍ່ຊົນລະປະທານ, ທໍ່ນ້ຳປະປາ, ການຕໍ່ເຕີມເທີບ, ການຕັ້ງຮ້ານຂາຍເຄື່ອງຕັນ ທາງຍ່າງ, ມີການດັດແປງຂອບທາງ, ທາງຍ່າງ ທີ່ເປັນສາຍເຫດພາໃຫ້ນ້ຳໄຫລລົງຮ່ອງລະບາຍນ້ຳບໍ່ ສະດວກ, ກວດກາການກໍ່ສ້າງ ແລະການປຸກສ້າງໃຫ້ຖືກຕ້ອງ ຕາມລະບຽບ ກົດໝາຍທີ່ໄດ້ກຳນົດໄວ້, ມີອຸປະຕິເຫດ ຫລື ສະພາບການຕ່າງໆທີ່ເປັນອຸປະສັກໃຫ້ແກ່ການຈະລາຈອນ ຕ້ອງລາຍງານ ຫລືແຈ້ງ ໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຊາບຢ່າງຮີບດ່ວນ ເພື່ອຫາທາງແກ້ໄຂຢ່າງທັນການ;
6. ຕິດຊັ່ງນ້ຳໜັກລົດບັນທຸກ ວັດຖຸ, ເຄື່ອງຂອງ ຫລື ສິນຄ້າຂະໜາດໃຫຍ່;
7. ຄົ້ນຄ້ວາ ແລະ ມີຄຳເຫັນກ່ຽວກັບການອະນຸຍາດ, ການກຳນົດເສັ້ນທາງ ພ້ອມທັງລົງຕິດຕາມແລະ

ກວດກາການຂົນສົ່ງພິເສດ, ການຂົນສົ່ງວັດຖຸອັນຕະລາຍ ຢູ່ບັນດາແຂວງ ແລະ ນະຄອນຫລວງ;

8. ປັບໃໝ ແລະມອບເງິນຄ່າປັບໃໝລົດບັນທຸກນ້ຳໜັກເກີນກຳນົດ ແລະຄ່າປັບໃໝອື່ນໆ ຕໍ່ຜູ້ລະເມີດລະບຽບກົດໝາຍ ກ່ຽວກັບການຂົນສົ່ງທາງບົກ, ການຈະລາຈອນທາງບົກ, ກົດໝາຍວ່າດ້ວຍ ທາງຫຼວງ ແລະກົດໝາຍເຕຫະຜັງເມືອງ ເຂົ້າກອງທຶນບູລະນະຮັກສາທາງຫລວງ ແລະ ກອງທຶນຄວາມປອດໄພທາງຖະໜົນຕາມລະບຽບການ;
9. ເກັບກຳຂໍ້ມູນ ກ່ຽວກັບສະພາບເສັ້ນທາງ, ການຂົນສົ່ງທາງບົກທຸກປະເພດ ຢູ່ພາຍໃນຂອບເຂດທົ່ວປະເທດ, ລະຫວ່າງປະເທດ ແລະ ຜ່ານແດນ;
10. ສ້າງແຜນງົບປະມານ ສຳລັບການໃຊ້ຈ່າຍບໍລິຫານ ແລະ ວິຊາການປະຈຳປີ ນຳສະເໜີຕໍ່ຂັ້ນເທິງເພື່ອພິຈາລະນາການອະນຸມັດ;
11. ຊີ້ນຳ, ນຳພາການຈັດຕັ້ງປະຕິບັດ ວຽກງານຂອງການຈັດຕັ້ງຂັ້ນລຸ່ມຂອງຕົນ ຢ່າງເປັນປົກກະຕິ;
12. ຂຶ້ນແຜນບຳລຸງ, ຝຶກອົບຮົມ, ກໍ່ສ້າງ, ຄຸ້ມຄອງ ແລະ ຊັບຊ້ອນພະນັກງານຂອງຕົນ ໃຫ້ຖືກຕ້ອງຕາມນະໂຍບາຍ ແລະ ລະບຽບການ ຂອງລັດທີ່ໄດ້ກຳນົດໄວ້;
13. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ ຂອງຂັ້ນເທິງ.

## <u>ມາດຕາ 4</u>. ຂອບເຂດສິດ

ກອງກວດກາໂຍທາທິການ ແລະຂົນສົ່ງທາງບົກ ຂັ້ນສູນກາງ ແລະ ຂະແໜງກວດກາໂຍທາທິການ ແລະຂົນສົ່ງທາງບົກ ຂັ້ນທ້ອງຖິ່ນ ມີສິດໜ້າທີ່ດັ່ງຕໍ່ໄປນີ້:

1. ສັ່ງໃຫ້ລົດວິສາຫະກິດຂົນສົ່ງ ແລະ ລົດຂົນສົ່ງສະເພາະທຸກຄັນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຂົ້າມາເຄື່ອນໄຫວຢູ່ໃນ ສປປ ລາວ ຊຶ່ງແລ່ນຢູ່ຕາມເສັ້ນທາງຫລວງ ຢຸດຊົ່ວຄາວ ເພື່ອກວດກາສະພາບເຕັກນິກຂອງລົດ, ເອກະສານປະຈຳລົດ, ເອກະສານກຳກັບສິນຄ້າ, ສັນຍາຂົນສົ່ງ, ເອກະສານຂອງຜູ້ຂັບຂີ່, ຈຳນວນສິນຄ້າ ແລະ ຜູ້ໂດຍສານ;
2. ສັ່ງໃຫ້ເຈົ້າຂອງລົດ ຫລືຜູ້ຂັບຂີ່ລົດຂົນສົ່ງຮັບຜິດຊອບໃນການແກ້ໄຂຕໍ່ວັດຖຸ, ເຄື່ອງຂອງ ຫລືສິນຄ້າທີ່ມີນ້ຳໜັກ ແລະຂະໜາດເກີນກວ່າລະບຽບການອະນຸຍາດໃຫ້ຮຽບຮ້ອຍພ້ອມທັງປັບໃໝຕາມລະບຽບການ ຈຶ່ງອະນຸຍາດໃຫ້ແລ່ນລົດຕໍ່ໄປໄດ້;
3. ແນະນຳ, ຕັກເຕືອນ, ສຶກສາອົບຮົມ ແລະ ປັບໃໝ ບຸກຄົນ ຫລື ການຈັດຕັ້ງ ທີ່ລະເມີດລະບຽບກົດໝາຍ ກ່ຽວກັບການຂົນສົ່ງທາງບົກ, ການຈະລາຈອນທາງບົກ, ກົດໝາຍວ່າດ້ວຍ ທາງຫຼວງ ແລະ ກົດໝາຍ ເຕຫະຜັງເມືອງ ທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີໜັກ ຫຼື ເບົາ;
4. ປະສານສົມທົບກັບບຸກຄົນ , ນິຕິບຸກຄົນ ຫລື ການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອແກ້ໄຂສິ່ງກີດຂວາງ ຢູ່ຕາມເສັ້ນທາງ ແລະ ຢູ່ໃນຂອບເຂດສະຫງວນຂອງທາງ ທີ່ເປັນການກີດຂວາງ ການຈະລາຈອນທາງບົກ ແລະ ມີຄວາມສ່ຽງພາໃຫ້ເກີດອຸບະຕິເຫດຕາມເສັ້ນທາງ;
5. ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງໃນການດຳເນີນຄະດີ ຫລື ຕິດຕາມບຸກຄົນ ທີ່ລະເມີດລະບຽບກົດໝາຍ ກ່ຽວກັບການຂົນສົ່ງທາງບົກ, ການຈະລາຈອນທາງບົກ , ກົດໝາຍວ່າດ້ວຍ ທາງຫຼວງ ແລະ ກົດໝາຍ ເຕຫະຜັງເມືອງ ມາດຳເນີນຄະດີຕາມລະບຽບກົດໝາຍດັ່ງກ່າວ;

6. ສະເໜີປັບປຸງພາລະບົດບາດ, ໜ້າທີ່ ແລະຄວາມຮັບຜິດຊອບຂອງຕົນ ລວມທັງລະບຽບການຕ່າງໆ ທີ່ເຫັນວ່າບໍ່ສອດຄ່ອງ;
7. ສະເໜີສ້າງຕັ້ງ, ປັບປຸງ ຫລື ຍົກເລີກກົງຈັກການຈັດຕັ້ງ ແລະ ຕຳແໜ່ງງານທີ່ຂຶ້ນກັບສິດຄຸ້ມຄອງ ຂອງຕົນ;
8. ສະເໜີແຕ່ງຕັ້ງ, ຍົກຍ້າຍ, ສັບຊ້ອນ, ເລື່ອນຊັ້ນ, ຍ້ອງຍໍ, ປະຕິບັດວິໄນຕໍ່ພະນັກງານ,ລັດຖະກອນ ຂອງຕົນ ຕາມນະໂຍບາຍ ແລະ ລະບຽບກົດໝາຍຂອງລັດ;
9. ເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະຕ່າງປະເທດ ຕາມການອະນຸຍາດຂອງທ່ານລັດຖະມົນຕີ,ເຊີນ ຜູ້ຕາງໜ້າຂອງທຸກພາກສ່ວນທີ່ກ່ຽວຂ້ອງມາປະຊຸມປຶກສາຫາລື ແລະ ປະກອບຄຳເຫັນ ຕໍ່ວຽກງານ ຂອງຕົນ;
10. ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ກອງທຶນ, ເງິນຊ່ວຍເຫລືອ, ພາຫະນະ, ອຸປະກອນທີ່ລັດປະ ກອບໃຫ້ຢ່າງມີປະສິດທິຜົນ;
11. ປະຕິບັດສິດອື່ນໆຕາມການມອບໝາຍຂອງຂັ້ນເທິງ.

## <u>ພາກທີ III</u>
## ໂຄງປະກອບການຈັດຕັ້ງ

### <u>ມາດຕາ 5</u>. ໂຄງປະກອບກົງຈັກການຈັດຕັ້ງ

**5.1 ໂຄງປະກອບ ກົງຈັກການຈັດຕັ້ງຂອງ ກອງກວດກາ ໂຍທາທິການ ແລະ ຂົນສົ່ງທາງ ບົກຂັ້ນສູນກາງ ປະກອບມີ:**

1. ພະແນກ ຈັດຕັ້ງ ແລະ ບໍລິຫານ.
2. ພະແນກ ແຜນການ-ງົບປະມານ ແລະ ສະຖິຕິ.
3. ພະແນກ ກວດກາການຂົນສົ່ງທາງບົກ.
4. ພະແນກ ເຕັກນິກ ແລະ IT.
5. ພະແນກ ນິຕິກຳ ແລະ ກົດໝາຍ
6. ພະແນກ ກວດກາ ພັກ-ລັດ

5.2 ໂຄງປະກອບ ກົງຈັກການຈັດຕັ້ງຂອງ ຂະແໜງກວດກາ ໂຍທາທິການ ແລະ ຂົນສົ່ງ ທາງບົກ ຂັ້ນທ້ອງຖິ່ນ ປະກອບມີ:

1. ໜ່ວຍງານ ຈັດຕັ້ງ - ບໍລິຫານ ແລະ ງົບປະມານ;
2. ໜ່ວຍງານ ສະຖິຕິ - ແຜນການ, ກົດໝາຍ
3. ໜ່ວຍງານ ເຕັກນິກສ້ອມແປງ ແລະ IT
4. ໜ່ວຍງານ ກວດກາການຂົນສົ່ງທາງບົກ;

**<u>ມາດຕາ 6</u>: ໂຄງປະກອບບຸກຄະລາກອນ**

**6.1 ໂຄງປະກອບບຸກຄະລາກອນຂອງ ກອງກວດກາ ໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນສູນກາງ.**

ກອງກວດກາ ໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນສູນກາງ ປະກອບດ້ວຍເຈົ້າໜ້າທີ່ ດັ່ງນີ້:

ຫົວໜ້າກອງ 1 ທ່ານ ມີຖານະທຽບເທົ່າຫົວໜ້າກົມ ຫລື ມີຕຳແໜ່ງບໍລິຫານປະເພດ 2, ຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຈາກທ່ານລັດຖະມົນຕີວ່າການ ຕາມການສະເໜີ ຂອງຄະນະຈັດຕັ້ງສູນກາງພັກ ແລະ ບົນພື້ນຖານການເຫັນດີ ເປັນເອກະພາບ ຈາກລັດຖະມົນຕີວ່າການ ກະຊວງ ຍທຂ.

ຫົວໜ້າກອງ ມີຄວາມຮັບຜິດຊອບໂດຍກົງ ຕໍ່ລັດຖະມົນຕີວ່າການ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ໃນການປະຕິບັດໜ້າທີ່ວຽກງານຂອງກອງ.

ຫົວໜ້າກອງ ເປັນຜູ້ລົງລາຍເຊັນ ເອກະສານຕ່າງໆຂອງກອງ, ກໍລະນີຕິດຂັດ ຫຼື ໄປເຄື່ອນໄຫວວຽກງານຢູ່ຕ່າງແຂວງ ຫລື ຕ່າງປະເທດ ຫົວໜ້າກອງ ຕ້ອງມອບສິດເປັນລາຍລັກອັກສອນເປັນການຊົ່ວຄາວໃຫ້ຮອງຫົວໜ້າກອງຜູ້ໃດຜູ້ໜຶ່ງ ວ່າການແທນ.

ກອງກວດກາ ໂຍທາທິການ ແລະ ຂົນສົ່ງຂັ້ນສູນກາງ ຍັງປະກອບມີ ຮອງຫົວໜ້າກອງຈຳນວນໜຶ່ງມີຖານະ ທຽບເທົ່າຮອງຫົວໜ້າກົມ ຫລື ມີຕຳແໜ່ງບໍລິຫານປະເພດ 3 , ເຊິ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຈາກທ່ານລັດຖະມົນຕີວ່າການ ກະຊວງ ໂຍທາທິການ ແລະ ຂົນສົ່ງ ໂດຍການສະເໜີຈາກ ກົມຈັດຕັ້ງ ແລະ ຄວາມເຫັນດີເປັນເອກະພາບ ຈາກຄະນະພັກກະຊວງ ແລະ ບົນພື້ນຖານຄວາມເອກະພາບກັບ ຫົວໜ້າກອງກວດກາໂຍທາທິການ ແລະ ຂົນສົ່ງ.

ຮອງຫົວໜ້າກອງ ມີໜ້າທີ່ຊ່ວຍຫົວໜ້າ ໃນການຊີ້ນຳ-ນຳພາ ວຽກງານລວມຂອງກອງ ແລະ ລົງເລິກຄວາມຮັບຜິດຊອບໃດໜຶ່ງ ຕາມການມອບໝາຍ ຂອງຫົວໜ້າກອງ ແລະ ມີສິດ ຮັກສາການແທນຕາມການມອບໝາຍຂອງຫົວໜ້າກອງ.

ກອງປະກອບມີ ຫົວໜ້າພະແນກຂອງກອງ ມີຕຳແໜ່ງບໍລິຫານປະເພດ 4 , ຮອງຫົວໜ້າພະແນກຂອງກອງ ມີຕຳແໜ່ງບໍລິຫານປະເພດ 5 ແລະ ພະນັກງານວິຊາການ ຈຳນວນໜຶ່ງ ຕາມຄວາມເໝາະສົມຂອງວຽກງານໃນແຕ່ລະໄລຍະ.

**6.2 ໂຄງປະກອບບຸກຄະລາກອນຂອງ ຂະແໜງກວດກາໂຍທາທິການ ແລະຂົນສົ່ງທາງບົກ ຂັ້ນທ້ອງຖິ່ນ.**

ຂະແໜງກວດກາໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນທ້ອງຖິ່ນ ປະກອບດ້ວຍເຈົ້າໜ້າທີ່ ດັ່ງນີ້:

ຫົວໜ້າຂະແໜງ 1 ທ່ານ ມີຖານະທຽບເທົ່າ ຫົວໜ້າຂະແໜງການອື່ນໆ ຂອງພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ ແລະ ນະຄອນຫລວງ ຫລື ມີຕຳແໜ່ງ ບໍລິຫານປະເພດ 5, ຮອງຫົວ

ໜ້າຂະແໜງ ມີຕໍາແໜ່ງບໍລິຫານປະເພດ 6, ຫົວໜ້າຈຸງານ ມີຕໍາແໜ່ງບໍລິຫານປະເພດ 7, ຮອງຫົວໜ້າຈຸງານຂອງໜ່ວຍ ມີຕໍາແໜ່ງ ບໍລິຫານປະເພດ 8 ແລະ ພະນັກງານວິຊາການ ຈໍານວນໜຶ່ງ ຕາມຄວາມເໝາະສົມ ຂອງວຽກງານໃນແຕ່ລະໄລຍະ.

ຫົວໜ້າພະແນກໂຍທາທິການ ແລະຂົນສົ່ງ ເປັນຜູ້ແຕ່ງຕັ້ງ ແລະ ປົດຕໍາແໜ່ງ ບັນດາຫົວໜ້າ ແລະ ຄະນະຮັບຜິດຊອບລະດັບຕ່າງໆ ຂອງຂະແໜງກວດກາໂຍທາທິການ ແລະຂົນສົ່ງທາງບົກຂັ້ນທ້ອງຖິ່ນ ດ້ວຍຄວາມເປັນເອກະພາບກັບກອງກວດກາໂຍທາທິການ ແລະ ຂົນສົ່ງທາງບົກຂັ້ນສູນກາງ.

## ໝວດທີ IV

## ໜ້າທີ່ຂອງພະແນກ ຂອງກອງກວດກາໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນສູນກາງ ແລະ ຈຸງານຂອງຂະແໜງກວດກາ ໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນທ້ອງຖິ່ນ

### ມາດຕາ 7: ໜ້າທີ່ຂອງບັນດາພະແນກ ຂອງກອງກວດກາໂຍທາທິການ ແລະຂົນສົ່ງທາງບົກ ຂັ້ນສູນກາງ

ໜ້າທີ່ຂອງບັນດາພະແນກ ຂອງກອງກວດກາໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນສູນກາງໄດ້ກໍານົດໄວ້ດັ່ງຕໍ່ໄປນີ້ :

**7.1 ໜ້າທີ່ຂອງພະແນກຈັດຕັ້ງ ແລະ ບໍລິຫານ**

7.1.1 ຄຸ້ມຄອງບັນຊີຈໍານວນພົນ, ຂຶ້ນແຜນບໍາລຸງ, ກໍ່ສ້າງ ແລະ ຊັບຊ້ອນບຸກຄະລາກອນ ພ້ອມທັງຄົ້ນຄວ້າລະບຽບການກ່ຽວກັບການປະຕິບັດນະໂຍບາຍຕ່າງໆ ໃຫ້ແກ່ພະນັກງານ, ລັດຖະກອນ ຂອງກອງກວດກາ ໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ;

7.1.2 ພົວພັນກັບພາກສ່ວນຕ່າງໆ ທັງຢູ່ພາຍໃນ ແລະພາຍນອກກະຊວງ ກ່ຽວກັບວຽກງານການກວດກາໂຍທາທິການ ແລະຂົນສົ່ງທາງບົກ ແລະວຽກງານບໍລິຫານ ຕາມປົກກະຕິປະຈໍາວັນ;

7.1.3. ກະກຽມເອກະສານ ພ້ອມດ້ວຍສິ່ງຈໍາເປັນຕ່າງໆ ໃຫ້ແກ່ພະນັກງານ , ລັດຖະກອນຂອງກອງ ໃນການເດີນທາງໄປປະຕິບັດວຽກລັດຖະການ ຢູ່ພາຍໃນ ແລະຕ່າງປະເທດ;

7.1.4 ຂຶ້ນແຜນການ, ຄຸ້ມຄອງ ແລະ ນໍາໃຊ້ງົບປະມານ, ທຶນຮອນ ຫລື ລາຍຮັບ, ພາຫະນະ, ອຸປະກອນເຄື່ອງໃຊ້ ແລະ ຊັບສິນຕ່າງໆ ທີ່ໄດ້ຮັບອະນຸມັດໃຫ້ມີປະສິດທິຜົນ ແລະຖືກຕ້ອງຕາມລະບຽບກົດໝາຍ, ຄຸ້ມຄອງບັນຊີ ແລະ ການນໍາໃຊ້ພາຫະນະ, ອຸປະກອນ ແລະ ຊັບສິນ ຂອງບັນດາຂະແໜງກວດກາ ການຂົນທາງບົກຂັ້ນທ້ອງຖິ່ນ;

7.1.5. ຕິດຕາມ ແລະກວດກາການເກັບ ແລະມອບເງິນຄ່າທໍານຽມລົດຜ່ານຂົວ-ທາງ, ຄ່າປັບໃໝ

ລົດທີ່ບັນທຸກນໍ້າໜັກເກີນກວ່າລະບຽບການອະນຸຍາດ ແລະເງິນຄ່າປັບໄໝອື່ນໆ ຂອງຫ້ອງການ ແລະໜ່ວຍງານທີ່ກ່ຽວຂ້ອງ ຂອງກອງກວດກາການຂົນສົ່ງທາງບົກ ທັງຂັ້ນສູນກາງ ແລະຂັ້ນທ້ອງຖິ່ນ ເພື່ອໃຫ້ປະຕິບັດຢ່າງຖືກຕ້ອງຕາມລະບຽບກົດໝາຍ.

7.1.6 ຄຸ້ມຄອງວຽກງານ ຈັດຕັ້ງ-ບໍລິຫານ ແລະພະນັກງານ, ຂຶ້ນແຜນບໍາລຸງສ້າງ, ການຝຶກອົບຮົມ ທາງດ້ານວຽກງານວິຊາສະເພາະ ໃຫ້ພະນັກງານທົ່ວຂະແໜງການ, ຂຶ້ນແຜນສ້າງພະນັກງານສືບທອດ ເພື່ອສະເໜີຂັ້ນເທິງຂອງຕົນພິຈາລະນາ ແລະວຽກງານກວດກາອື່ນໆ.

7.1.7 ເປັນເຈົ້າການ ໃນການສ້າງ ແລະ ກໍານົດຕໍາແໜ່ງງານ ເພື່ອສະເໜີຂັ້ນເທິງຂອງຕົນ ພິຈາລະນາຮັບຮອງ.

7.2 **ໜ້າທີ່ຂອງພະແນກ ແຜນການ-ງົບປະມານ ແລະ ສະຖິຕິ:**

7.2.1 ຂຶ້ນແຜນງົບປະມານ, ລາຍຮັບວິຊາການປະຈໍາປີຂອງກອງ, ດັດແກ້ງົບປະມານ, ຄຸ້ມຄອງການນໍາໃຊ້ງົບປະມານ, ເງິນຊ່ວຍເຫລືອອື່ນໆ;

7.2.2 ຄຸ້ມຄອງງົບປະມານ, ຄຸ້ມຄອງລາຍຮັບວິຊາການຂອງກອງ ແລະປະກອບເອກະສານທາງດ້ານການເງິນທຸກຢ່າງຂອງກອງ;

7.2.3 ສະຫລຸບສັງລວມ ການໃຊ້ຈ່າຍງົບປະມານ ທີ່ລັດຖະບານສະໜອງໃຫ້, ລາຍຮັບວິຊາການ, ເງິນຊ່ວຍເຫລືອອື່ນໆ, ຂໍ້ມູນຕົວເລກສະຖິຕິ, ສະຫລຸບການຈັດຕັ້ງປະຕິບັດວຽກງານປະຈໍາເດືອນ, ປະຈໍາງວດ, 6 ເດືອນ, 9 ເດືອນ ແລະປະຈໍາປີ ພາຍໃນກອງຂອງຕົນ.

7.2.4 ສົມທົບກັບພະແນກການທີ່ກ່ຽວຂ້ອງ ພາຍໃນກອງຂອງຕົນ ໃນການຈັດຊື້, ຈັດຈ້າງ ອຸປະກອນ, ເຄື່ອງມື ເພື່ອຮັບໃຊ້ວຽກງານກວດກາ;

7.3 **ໜ້າທີ່ຂອງ ພະແນກ ກວດກາການຂົນສົ່ງທາງບົກ:**

7.3.1 ກວດກາລົດວິສາຫະກິດຂົນສົ່ງສິນຄ້າ, ໂດຍສານ ແລະລົດຂົນສົ່ງສະເພາະ ທັງພາຍໃນ ແລະຕ່າງປະເທດ ທີ່ເຂົ້າມາເຄື່ອນໄຫວຢູ່ໃນ ສປປ ລາວ.

7.3.2 ກວດກາເອກະສານປະຈໍາລົດ, ເອກະສານຕິດຕາມສິນຄ້າ, ເອກະສານພະນັກງານຂັບລົດ ແລະເອກະສານອື່ນໆທີ່ກ່ຽວຂ້ອງ ກ່ຽວກັບວຽກງານການຂົນສົ່ງທາງບົກ.

7.3.3 ກວດກາຂະໜາດບັນທຸກສິນຄ້າ, ນໍ້າໜັກບັນທຸກ, ຈໍານວນບັນທຸກຜູ້ໂດຍສານທັງພາຍໃນ ແລະລົດຂົນສົ່ງໂດຍສານລະຫວ່າງປະເທດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍວາງອອກ.

7.3.4 ກວດກາຢ່າງເປັນປົກກະຕິ ສະພາບຂອງເສັ້ນທາງ, ຖ້າເຫັນວ່າມີເສັ້ນທາງເປ່ເພ ຫລື ມີສິ່ງກີດຂວາງອື່ນໆ ດ້ວຍໄພທໍາມະຊາດ ຫຼື ຍ້ອນສາຍເຫດການກໍ່ສ້າງ ແລະປຸກສ້າງ ທີ່ເປັນອຸປະສັກໃຫ້ແກ່ການຈະລາຈອນ ແລະການຂົນສົ່ງ ເພື່ອລາຍງານ ຫລື ແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຊາບຢ່າງຮີບດ່ວນ ເພື່ອຫາທາງແກ້ໄຂຢ່າງທັນການ;

7.3.5 ຕິດຊັ່ງນໍ້າໜັກລົດບັນທຸກ ວັດຖຸ, ເຄື່ອງຂອງ ຫລື ສິນຄ້າຂະໜາດໃຫຍ່, ກວດກາທາດເຫຼົ້າໃນເລືອດ ຂອງຜູ້ຂັບຂີ່ພາຫະນະຂົນສົ່ງທາງບົກ, ກວດກາສຽງ, ຄວັນ, ກວດກາຄວາມໄວຂອງລົດຂົນສົ່ງສິນຄ້າ ແລະໂດຍສານ;

7.3.6 ລົງຕິດຕາມ ແລະ ກວດກາການຂົນສົ່ງພິເສດ , ການຂົນສົ່ງວັດຖຸອັນຕະລາຍ ຢູ່ບັນດາ ແຂວງ ແລະນະຄອນຫລວງ;

7.3.7 ປັບໃໝ ແລະມອບເງິນຄ່າປັບໃໝລົດບັນທຸກນ້ຳໜັກເກີນກຳນົດ ແລະ ຄ່າປັບໃໝອື່ນໆ ຕໍ່ຜູ້ລະເມີດລະບຽບກົດໝາຍ ຂອງຂະແໜງການໂຍທາທິການ ແລະຂົນສົ່ງເຂົ້າກອງທຶນ ບູລະນະຮັກສາທາງຫລວງ ແລະກອງທຶນຄວາມປອດໄພທາງຖະໜົນຕາມລະບຽບການ.

7.3.8 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງຂັ້ນເທິງ.

**7.4 ໜ້າທີ່ຂອງພະແນກ ເຕັກນິກ ແລະ IT:**

7.4.1 ຄົ້ນຄ້ວາອອກແບບສະຖານີ ແລະ ສ້າງມາດຖານສະຖານີ ຕິດຊັ່ງລົດບັນທຸກໜັກ;

7.4.2 ຕິດຕາມ, ກວດກາ ການກໍ່ສ້າງ ສະຖານີ ຕິດຊັ່ງລົດບັນທຸກໜັກ;

7.4.3 ຄັດເລືອກມາດຖານ ອຸປະກອນ, ຊິງຊັ່ງ, ເຄື່ອງວັດແທກທາດເຫຼົ້າ, ຄວັນ, ສຽງ, ເຄື່ອງຈັບ ຄວາມໄວພາຫະນະ ແລະ ຈັດຊື້ ອຸປະກອນກວດກາ ທີ່ກ່ຽວຂ້ອງ;

7.4.4 ຕິດຕາມ, ກວດກາ ສະຖານີ, ເຄື່ອງມື ແລະອຸປະກອນການກວດກາທັງໝົດ ເພື່ອບູລະ ນະຮັກສາ, ສ້ອມແປງ ແລະ ຍົກລະດັບ.

**7.5 ໜ້າທີ່ຂອງພະແນກ ນິຕິກຳ ແລະ ກົດໝາຍ:**

7.5.1 ຄົ້ນຄ້ວາ ບັນດາຂໍ້ກຳນົດ, ກົດລະບຽບ, ກົດໝາຍ, ມາດຖານເຕັກນິກ, ແຜນຍຸດທະສາດ ແລະບັນດານິຕິກຳຕ່າງໆ ເພື່ອນຳສະເໜີຂັ້ນເທິງຂອງຕົນອະນຸມັດ ແລະນຳໃຊ້ເຂົ້າໃນການ ກວດກາການຂົນສົ່ງທາງບົກ, ການຄຸ້ມຄອງວຽກງານຕິດຊັ່ງນ້ຳໜັກລົດບັນທຸກ;

7.5.2 ຄົ້ນຄ້ວາ ແລະວາງແຜນຝຶກອົບຮົມ, ເຜີຍແຜ່ບັນດາຂໍ້ກຳນົດ, ກົດລະບຽບ, ກົດໝາຍ ແລະ ເອກະສານນິຕິກຳອື່ນໆ ໃຫ້ຜູ້ດຳເນີນທຸລະກິດຂົນສົ່ງທາງບົກ, ນັກຂັບຂີ່ລົດຂົນສົ່ງສິນຄ້າ, ຂົນສົ່ງຜູ້ໂດຍສານ, ນັກຂັບຂີ່ລົດຂົນສົ່ງສະເພາະ, ເຈົ້າຂອງພາຫະນະ, ພະນັກງານ, ລັດ ຖະກອນ ທີ່ນອນຢູ່ໃນຄວາມຮັບຜິດຊອບຂອງຕົນເອງ ເພື່ອໃຫ້ເຂົາເຈົ້າມີຄວາມຮັບຮູ້, ເຊື່ອມ ຊຶມ ແລະປະຕິບັດລະບຽບ ກົດໝາຍຢ່າງຖືກຕ້ອງ; .

7.5.3 ໃຫ້ຄຳປຶກສາ ແລະ ຄຳແນະນຳ ທາງດ້ານກົດໝາຍແກ່ບັນດາໜ່ວຍກວດກາການຂົນສົ່ງທາງ ບົກຂັ້ນທ້ອງຖິ່ນ ໃນການດຳເນີນຄະດີຕໍ່ຜູ້ລະເມີດລະບຽບກົດໝາຍ ກ່ຽວກັບການຂົນສົ່ງທາງ ບົກ , ການຈະລາຈອນທາງບົກ ການປົກປັກຮັກສາ ທາງຫລວງ ແລະ ລະບຽບການອື່ນທີ່ ກ່ຽວຂ້ອງ;

7.5.4 ຮ່າງເອກະສານນິຕິກຳຕ່າງໆຂອງກອງ ເຊັ່ນ: ກົດລະບຽບ, ລະບຽບການ, ຈົດໝາຍທາງລັດ ຖະການ,ຄຳສັ່ງ,ແຈ້ງການ, ບົດແນະນຳ, ບົດບັນທຶກກອງປະຊຸມ, ຂໍ້ຜູກພັນສັນຍາ, ຄຳຮ້ອງ ຟ້ອງ ແລະ ເອກະສານທາງລັດຖະການອື່ນໆ ຕາມຄຳສັ່ງຂອງຫົວໜ້າ ຫຼື ຄະນະກອງ.

**7.6. ໜ້າທີ່ຂອງພະແນກກວດກາພັກ-ລັດ:**

7.6.1 ຈັດຕັ້ງປະຕິບັດນະໂຍບາຍ, ລະບຽບກົດໝາຍ, ແຜນການ, ມະຕິ, ຄຳສັ່ງ ຂອງອົງການ ກວດກາຂັ້ນເທິງ ກ່ຽວກັບວຽກງານກວດກາການບໍລິຫານລັດ ແລະ ກວດກາຕາມຂະແໜງ ການວິຊາເພາະ, ເຕັກນິກ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

7.6.2 ໂຄສະນາເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບວຽກງານກວດກາລັດໂດຍປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ.

7.6.3 ກວດກາການປະຕິບັດລະບຽບກົດໝາຍ, ແຜນການ, ສິດ, ໜ້າທີ່, ຄວາມຮັບຜິດຊອບຂອງການຈັດຕັ້ງ, ພະນັກງານ, ລັດຖະກອນພາຍໃນກອງ ແລະ ສົມທົບຂະແໜງກວດກາຢູ່ທ້ອງຖິ່ນ ເພື່ອກວດກາຂະແໜງການຕົນຕາມສາຍຕັ້ງ.

7.6.4 ຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງພົນລະເມືອງ, ພະນັກງານ, ລັດຖະກອນ ກ່ຽວກັບການກະທຳ ຫລື ການຕົກລົງບັນຫາໃດໜຶ່ງ ທີ່ລະເມີດລະບຽບກົດໝາຍ ຂອງການຈັດຕັ້ງ ຫລື ພະນັກງານ ພາຍໃນກອງຂອງຕົນ.

7.6.5 ພົວພັນ ແລະ ປະສານສົມທົບກັບບັນດາພະແນກພາຍໃນກອງ ແລະ ຂະແໜງການສາຍຕັ້ງ ເພື່ອດຳເນີນການກວດກາ, ການແກ້ໄຂ ແລະ ການປະຕິບັດຜົນຂອງການກວດກາຕາມພາລະບົດບາດຂອງຕົນ.

7.6.6 ສະຫລຸບ, ລາຍງານການເຄື່ອນໄຫວວຽກງານກວດກາ ແລະ ຜົນຂອງການກວດກາ ໃນຂອບເຂດຄວາມຮັບຜິດຊອບຂອງຕົນໃຫ້ຫົວໜ້າກອງ/ຄະນະກວດກາຂອງຕົນ ແລະ ຫົວໜ້າກົມກວດກາ/ຄະນະກວດກາກະຊວງ ຢ່າງເປັນປົກກະຕິ.

7.6.7 ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ ຂອງຫົວໜ້າກອງຂອງຕົນ/ຄະນະກວດກາ,ຫົວໜ້າກົມກວດກາ ກະຊວງ ຍທຂ.

7.6.8 ຕິດຕາມກວດກາການປະມູນໂຄງການ, ການຈັດຊື້ວັດຖຸອຸປະກອນ ແລະ ພາຫະນະຮັບໃຊ້, ການຈັດຈ້າງຊ່ຽວຊານທີ່ປຶກສາໂຄງການ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງກອງ.

7.6.9 ຕິດຕາມກວດກາການຈັດຕັ້ງປະຕິບັດໂຄງການ ເຊິ່ງລວມມີ: ການປະຕິບັດໜ້າທີ່ຂອງທີ່ປຶກສາ, ການປະຕິບັດໜ້າທີ່ຂອງຫົວໜ້າໂຄງການ ແລະ ບໍລິສັດຮັບເໝົາ.

## <u>ມາດຕາ 8:</u> ໜ້າທີ່ຂອງໜ່ວຍກວດກາການຂົນສົ່ງທາງບົກຂັ້ນທ້ອງຖິ່ນ

ໜ້າທີ່ຂອງບັນດາຈຸງານ ຂອງໜ່ວຍກວດກາການຂົນສົ່ງທາງບົກຂັ້ນທ້ອງຖິ່ນ ໄດ້ກຳນົດໄວ້ດັ່ງຕໍ່ໄປນີ້ :

**8.1. ໜ້າທີ່ຂອງໜ່ວຍງານຈັດຕັ້ງ-ບໍລິຫານ ແລະ ງົບປະມານ:**

8.1.1 ຂຶ້ນແຜນງົບປະມານ ບໍລິຫານ, ງົບປະມານບຳລຸງຮັກສາ, ສ້ອມແປງດ່ານຕິດຊັ່ງລົດບັນທຸກ, ຄຸ້ມຄອງບັນຊີ, ບັນຈຸ ແລະຊັບຊ້ອນບຸກຄະລາກອນ ພ້ອມທັງຄົ້ນຄ້ວາ ການປະຕິບັດນະໂຍບາຍຕ່າງໆ ຕໍ່ພະນັກງານ, ລັດຖະກອນ ຂອງໜ່ວຍງານຕາມລະບຽບການ;

8.1.2 ພົວພັນກັບພາກສ່ວນຕ່າງໆ ທັງຢູ່ພາຍໃນ , ພາຍນອກ ພະແນກໂຍທາທິການ ແລະຂົນສົ່ງ ແລະໜ່ວຍຂອງຕົນ ກ່ຽວກັບວຽກງານກວດກາການຂົນສົ່ງທາງບົກ ແລະວຽກງານບໍລິຫານຕາມປົກກະຕິປະຈຳວັນ;

8.1.3 ກະກຽມເອກະສານ ພ້ອມດ້ວຍສິ່ງຈຳເປັນຕ່າງໆໃຫ້ແກ່ພະນັກງານ, ລັດຖະກອນຂອງໜ່ວຍໃນການເດີນທາງໄປປະຕິບັດວຽກລັດຖະການ;

8.1.4 ຄຸ້ມຄອງ ແລະ ນໍາໃຊ້ງົບປະມານ, ທຶນ, ລາຍຮັບ, ພາຫະນະ, ອຸປະກອນເຄື່ອງໃຊ້ ແລະ ຊັບສິນຕ່າງໆ ທີ່ໄດ້ຮັບອະນຸມັດໃຫ້ມີປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບ ກົດໝາຍ;

8.1.5 ຕິດຕາມການເກັບ ແລະ ມອບເງິນຄ່າທໍານຽມລົດຜ່ານຂົວ-ທາງ, ຄ່າປັບໃໝລົດທີ່ບັນທຸກນໍ້າໜັກເກີນກວ່າທີ່ລະບຽບການອະນຸຍາດ ແລະ ເງິນຄ່າປັບໃໝອື່ນໆ ໃຫ້ໜ່ວຍງານທີ່ກ່ຽວຂ້ອງປະຕິບັດຢ່າງຖືກຕ້ອງ ຕາມລະບຽບກົດໝາຍ.

8.1.6 ຄົ້ນຄ້ວາສ້າງແຜນການຝຶກອົບຮົມ, ບໍາລຸງ ແລະຍົກລະດັບພະນັກງານ ວິຊາການຂອງຕົນຢ່າງເປັນລະບົບ.

**8.2 . ໜ້າທີ່ຂອງໜ່ວຍງານ ສະຖິຕິ-ແຜນການ ແລະ ກົດໝາຍ:**

8.2.1 ຂື້ນແຜນການດໍາເນີນງານ ປະຈໍາງວດງວດ, 6 ເດືອນ ແລະປະຈໍາປີ ຂອງໜ່ວຍງານພ້ອມທັງສະຫລຸບສັງລວມ ແລະລາຍງານຜົນຂອງການຈັດຕັ້ງປະຕິບັດແຜນການ,ແຜນງານ ແລະ ໂຄງການ ຕໍ່ຂັ້ນເທິງຂອງຕົນ ເພື່ອຮັບຊາບເປັນແຕ່ລະໄລຍະ. ລາຍງານຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດວຽກງານ ເພື່ອໃຫ້ຂັ້ນເທິງຂອງຕົນ ມີທິດຊີ້ນໍາ ແລະພິຈາລະນາແກ້ໄຂ;

8.2.2 ວາງແຜນການຈັດຕັ້ງປະຕິບັດ ແຜນດໍາເນີນງານດ້ານຄວາມປອດໄພທາງຖະໜົນ ຢູ່ໃນຂອບເຂດທ້ອງຖິ່ນຂອງຕົນ;

8.2.3 ຄົ້ນຄ້ວາ ສ້າງກົດລະບຽບພາຍໃນກ່ຽວກັບການປະຕິບັດວຽກງານດ້ານຕ່າງໆ, ເຜີຍແຜ່ ແລະ ແຈ້ງການໃຫ້ໜ່ວຍງານທີ່ກ່ຽວຂ້ອງຂອງກອງຂະແໜງ ຈັດຕັ້ງປະຕິບັດກົດລະບຽບ ຫລື ລະບຽບການຕ່າງໆ ທີ່ກອງກວດກາການຂົນສົ່ງ ຂັ້ນສູນກາງວາງອອກ ກ່ຽວກັບເຕັກນິກ ຫລື ວິທີການກວດກາດ້ານຕ່າງໆ ຕາມເສັ້ນທາງຫລວງນອກຕົວເມືອງ, ການຄຸ້ມຄອງວຽກງານຕິດຊັ່ງນໍ້າໜັກລົດບັນທຸກ;

8.2.4 ໂຄສະນາເຜີຍແຜ່ ລະບຽບກົດໝາຍກ່ຽວກັບການຂົນສົ່ງທາງບົກ, ການຈະລາຈອນທາງບົກ, ການປົກປັກຮັກສາທາງຫລວງ ແລະລະບຽບກົດໝາຍອື່ນ ທີ່ກ່ຽວຂ້ອງ ໃຫ້ແກ່ມວນຊົນໄດ້ຮັບຊາບຢ່າງກ້ວາງຂວາງ;

8.2.5 ຄົ້ນຄ້ວາເອກະສານຮ້ອງຟ້ອງ, ປະກອບເອກະສານຮ້ອງຟ້ອງ ເພື່ອດໍາເນີນຄະດີ ຕໍ່ຜູ້ລະເມີດລະບຽບ ກົດໝາຍກ່ຽວກັບການຂົນສົ່ງທາງບົກ, ການຈະລາຈອນທາງບົກ, ກົດໝາຍທາງຫລວງ, ກົດໝາຍຜັງເມືອງ ແລະລະບຽບການອື່ນໆ.

8.2.6 ເກັບກໍາ ແລະລາຍງານສະຖິຕິ ກ່ຽວກັບການບັນທຸກນໍ້າໜັກເກີນ ຂອງລົດບັນທຸກ ທີ່ແລ່ນຕາມເສັ້ນທາງ ໃຫ້ຂັ້ນເທິງຂອງຕົນຮັບຊາບ, ວິໃຈຂໍ້ມູນ ກ່ຽວກັບການລະເມີດດັ່ງກ່າວ;

8.2.7 ຮ່າງເອກະສານຕ່າງໆທາງລັດຖະການຕາມຄໍາສັ່ງ ຂອງຫົວໜ້າ ແລະຄະນະຂະແໜງ.

**8.3. ໜ້າທີ່ຂອງໜ່ວຍງານເຕັກນິກສ້ອມແປງ ແລະ IT:**

8.3.1 ຂື້ນແຜນບູລະນະຮັກສາ, ສ້ອມແປງສະຖານີຕິດຊັ່ງລົດບັນທຸກໜັກພາຍໃນແຂວງຂອງຕົນ;

8.3.2 ຕິດຕາມ ການກໍ່ສ້າງ ແລະ ສ້ອມແປງ ສະຖານີ ຕິດຊັ່ງລົດບັນທຸກໜັກ;

8.3.3 ຄຸ້ມຄອງສະຖານນີຕິດຊັ່ງລົດບັນທຸກ; ຄຸ້ມຄອງ, ກວດກາເຄື່ອງມືກວດກາ ແລະອຸປະກອນຕິດຊັ່ງລົດບັນທຸກໜັກ;

8.3.4 ບຳລຸງຮັກສາ, ສ້ອມແປງ ແລະ ຍົກລະດັບ.ເຄື່ອງມື ແລະ ອຸປະກອນການກວດກາ, ອຸປະກອນຕິດຊັ່ງລົດບັນທຸກໜັກ ພາຍໃນແຂວງ ເພື່ອນຳສະເໜີຂັ້ນເທິງຂອງຕົນ;

8.3.5 ເກັບກຳຂໍ້ມູນ ເພື່ອສ້າງລະບົບ IT ກ່ຽວກັບວຽກງານກວດກາ ແລະການຕິດຊັ່ງລົດບັນທຸກໜັກ, ລົງຂໍ້ມູນ ໃສ່ເວບໄຊ ກ່ຽວກັບການກວດກາ ແລະ ຕິດຊັ່ງລົດບັນທຸກໜັກ;

**8.4. ໜ້າທີ່ຂອງໜ່ວຍງານກວດກາການຂົນສົ່ງທາງບົກ:**

8.4.1 ຈັດຕັ້ງການກວດກາ ການຂົນສົ່ງທາງບົກ ທີ່ກອງກວດກາການຂົນສົ່ງທາງບົກ ຂັ້ນສູນກາງວາງອອກ ເຊັ່ນ : ການຄວບຄຸມຄວາມໄວ, ການຄວບຄຸມນ້ຳໜັກ, ຂະໜາດບັນທຸກ, ກວດກາຄວັນ ອອກຈາກທໍ່ໄອເສຍພາຫະນະ, ກວດກາເອກະສານປະຈຳລົດ, ກວດກາເອກະສານສິນຄ້າ,ເອກະສານຂອງຜູ້ຂັບຂີ່ ລວມທັງກວດກາທາດເຫລົ້າໃນເລືອດ ຂອງຜູ້ຂັບຂີ່ຕາມເສັ້ນທາງຫລວງຢູ່ນອກຕົວເມືອງ , ກວດກາພາຫະນະຂົນສົ່ງທຸກປະເພດ ທີ່ສ້າງຄວາມເປື້ອນເປິໃສ່ເສັ້ນທາງ ພາຍໃນເທດສະບານ ແລະ ນອກຕົວເມືອງ;

8.4.2 ປະສານສົມທົບ, ຮ່ວມມື, ຊ່ວຍເຫລືອ ແລະແລກປ່ຽນຂໍ້ມູນ, ຂ່າວສານ ກັບໜ່ວຍກວດກາການຂົນສົ່ງທາງບົກ ຂອງບັນດາແຂວງ ແລະນະຄອນຫລວງ ທີ່ຢູ່ໃກ້ຄຽງ ຢ່າງເປັນປົກກະຕິ ລວມທັງແລກປ່ຽນຂໍ້ມູນ, ຂ່າວສານ ແລະຖອດຖອນບົດຮຽນໃນດ້ານຕ່າງໆ ກັບບັນດາໜ່ວຍກວດກາການຂົນສົ່ງທາງບົກຂອງແຂວງອື່ນໆ;

8.4.3 ລົງຕິດຕາມ ກວດກາ ລົດຂົນສົ່ງພິເສດ ແລະກວດກາສະພາບເສັ້ນທາງຂົນສົ່ງ ລວມທັງສະພາບການຕ່າງໆ ຕາມເສັ້ນທາງຫລວງ ຢູ່ໃນທ້ອງຖິ່ນຂອງຕົນຕາມໜ້າທີ່ທີ່ກຳນົດໄວ້ໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້;

8.4.4 ສຶກສາອົບຮົມ, ແນະນຳ, ຕັກເຕືອນ ແລະປະຕິບັດມາດຕະການຕ່າງໆຕໍ່ຜູ້ລະເມີດຂໍ້ກຳນົດ, ກົດລະບຽບ, ກົດໝາຍຕ່າງໆ ແລະດຳລັດນາຍົກລັດຖະມົນຕີ ສະບັບເລກທີ 188/ນຍ, ລົງວັນທີ 03/07/2007 ວ່າດ້ວຍການປັບໃໝ ແລະມາດຕະການຕ່າງໆ ຕໍ່ຜູ້ລະເມີດລະບຽບກົດໝາຍກ່ຽວກັບການຈະລາຈອນທາງບົກ, ການຂົນສົ່ງທາງບົກ, ການປົກປັກຮັກສາທາງຫລວງ ພ້ອມທັງຮັກສາເງິນຄ່າປັບໃໝ ເພື່ອມອບເຂົ້າສາງກອງທຶນຄວາມປອດໄພທາງຖະໜົນ.

8.4.5 ອຳນວຍຄວາມສະດວກໃຫ້ລົດຂົນສົ່ງສິນຄ້າ, ເຄື່ອງຂອງຂະໜາດໃຫ່ຍເຂົ້າຕິດຊັ່ງນ້ຳໜັກ ແລະທຳການຕິດຊັ່ງນ້ຳໜັກລົດບັນທຸກດັ່ງກ່າວ ຢ່າງຖືກຕ້ອງຕາມເຕັກນິກ ແລະໂປ່ງໃສ;

8.4.6 ປະຕິບັດມາດຕະການຕ່າງໆ ຕໍ່ເຈົ້າຂອງ ຫລື ຜູ້ຂັບຂີ່ລົດຂົນສົ່ງສິນຄ້າ, ເຄື່ອງຂອງທີ່ມີນ້ຳໜັກເກີນກວ່າລະບຽບການອະນຸຍາດດັ່ງນີ້;

8.4.7 ທຳການປັບໃໝເຈົ້າຂອງ ຫລື ຜູ້ຂັບຂີ່ລົດຂົນສົ່ງ ທີ່ມີນ້ຳໜັກເກີນ ຫຼື ບັນທຸກບໍ່ຖືກຕາມລະບຽບທີ່ທາງການກຳນົດ; ຮັກສາເງິນຄ່າປັບໃໝຕ່າງໆ ເພື່ອມອບເຂົ້າສາງ ຂອງກອງທຶນບູລະນະຮັກສາທາງຫລວງຕາມລະບຽບການ;

8.4.8 ສັ່ງໃຫ້ເຈົ້າຂອງ ຫຼື ຜູ້ຂັບຂີ່ລົດຂົນສົ່ງ ທີ່ມີນ້ຳໜັກເກີນ ຫຼື ບັນທຸກບໍ່ຖືກຕາມລະບຽບທີ່ທາງການກຳນົດຮັບຜິດຊອບໃນການແກ້ໄຂຕໍ່ສິນຄ້າ, ເຄື່ອງຂອງຕາມສ່ວນນ້ຳໜັກເກີນໃຫ້ຮຽບຮ້ອຍ ຕາມລະບຽບການເສຍກ່ອນ ຈຶ່ງອະນຸຍາດໃຫ້ແລ່ນລົດຕໍ່ໄປໄດ້.

## ໝວດທີ V

## ລະບອບແບບແຜນວິທີເຮັດວຽກ

### ມາດຕາ 9: ການເຄື່ອນໄຫວວຽກງານຂອງກອງກວດກາ ໂຍທາທິການ ແລະຂົນສົ່ງ ຂັ້ນສູນກາງ ແລະທ້ອງຖິ່ນ ມີດັ່ງນີ້:

9.1 ທຸກການເຄື່ອນໄຫວ ແລະ ດຳເນີນງານ ຕ້ອງບົນພື້ນຖານແນວທາງຂອງພັກ, ແຜນນະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບກົດໝາຍຂອງລັດ, ຫັນເອົາແຜນຍຸດທະສາດຂອງກະຊວງ ໂຍທາທິການ ແລະ ຂົນສົ່ງ ໃຫ້ກາຍເປັນແຜນການ,ແຜນງານ ແລະ ໂຄງການລະອຽດ ແລ້ວຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ.

9.2 ປະຕິບັດ ຕາມຫລັກການລວມສູນ ປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ແບ່ງໃຫ້ບຸກຄົນຮັບຜິດຊອບ ແລະ ປະຕິບັດລະບອບຫົວໜ້າດຽວ, ເສີມຂະຫຍາຍ ຫົວຄິດປະດິດສ້າງໃນຂະແໜງການຂອງຕົນ ຢ່າງເປັນຮູບປະທຳ.

9.3 ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນ ກັບພາກສ່ວນອື່ນ ທີ່ກ່ຽວຂ້ອງ.

9.4 ເຮັດວຽກຕ້ອງມີການກວດກາດ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້, ຜົນເສັຍ ພ້ອມທັງປະຕິບັດລະບອບລາຍງານສ່ອງແສງ ໃຫ້ຂັ້ນເທິງຂອງຕົນຢ່າງເຂັ້ມງວດ.

9.5 ປະຕິບັດ ລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີຂອງຕົນເປັນປົກກະຕິ.

### ມາດຕາ 10: ເຄື່ອງແບບ, ເຄື່ອງໝາຍຊັ້ນ, ກາໝາຍ ແລະ ຕາປະທັບ

ເຈົ້າໜ້າທີ່ຂອງກອງກວດກາໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນສູນກາງ ແລະເຈົ້າໜ້າທີ່ກວດກາໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນທ້ອງຖິ່ນ ມີເຄື່ອງແບບ, ເຄື່ອງໝາຍຊັ້ນ, ກາໝາຍສະເພາະ ເພື່ອນຸ່ງຖື ໃນເວລາປະຕິບັດໜ້າທີ່ວຽກງານ ແລະ ມີຕາປະທັບເປັນ ຂອງຕົນເອງເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ ຊຶ່ງມີຂໍ້ຕົກລົງຂອງລັດຖະມົນຕີວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດອອກໂດຍສະເພາະຕ່າງຫາກ.

# ໝວດທີ VI

## ບົດບັນຍັດສຸດທ້າຍ

**ມາດຕາ 11: ການຈັດຕັ້ງປະຕິບັດ**

ສະເໜີບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາແຂວງ, ນະຄອນຫລວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງ ສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 12: ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີວ່າການ**

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ກົມຂົນສົ່ງ

**ສະເໜີ ຮ່າງ ຂໍ້ຕົກລົງ**
**ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ**
**ຂອງກອງກວດກາ ໂຍທາທິການ ແລະ**
**ຂົນສົ່ງທາງບົກ**

ສະເໜີໂດຍ: ທ່ານ ວຽງສະຫັວດ ສີພັນດອນ
ຫົວໜ້າກົມຂົນສົ່ງ

- ອີງຕາມ ດຳລັດຂອງນາຍຍົກລັດຖະມົນຕີ ສະບັບເລກທີ 373 / ນຍ ,ລົງວັນທີ 22 ຕຸລາ 2007 ວ່າດ້ວຍການຈັດຕັ້ງ ແລະເຄື່ອນໄຫວຂອງກະຊວງໂຍທາທິການ ແລະ ຂົນສົ່ງ;
- ອີງຕາມ ບົດປະກອບຄຳເຫັນ ຂອງທະບວງການປົກຄອງ ແລະຄຸ້ມຄອງລັດຖະກອນ ສະບັບເລກທີ 15/ທປຄ.ກພລ , ລົງວັນທີ 24 ຕຸລາ 2008

-ອີງຕາມ ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ (ສະບັບປັບປຸງ) ເລກທີ 24/ສພຊ,ລົງວັນທີ 12 ທັນວາ 2012
-ອີງຕາມ ກົດໝາຍວ່າດ້ວຍ ການຈະລາຈອນທາງບົກ (ສະບັບປັບປຸງ) ເລກທີ 23/ສພຊ,ລົງວັນທີ12 ທັນວາ 2012
-ອີງຕາມ ກົດໝາຍວ່າດ້ວຍ ທາງຫຼວງ ເລກທີ 24/ສພຊ,ລົງວັນທີ12 ທັນວາ 2012
-ອີງຕາມ ກົດໝາຍ ເຄຫະຜັງເມືອງ ສະບັບເລກທີ 03/99/ສພຊ , ລົງວັນທີ 03/04/99.

<u>ມາດຕາ 1:</u> **ຈຸດປະສົງ**

ເພື່ອກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະແບບແຜນວິທີເຮັດວຽກຂອງກອງກວດກາ ໂຍທາທິການ ແລະ ຂົນສົ່ງທາງບົກເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງ

## <u>ມາດຕາ 2</u>: ທີ່ຕັ້ງ ແລະ ພາລະບົດບາດ

ກອງກວດກາ ຍທຂ ຂັ້ນສູນກາງ ເປັນກອງວິຊາການຂັ້ນI, ທຽບເທົ່າກັບກົມ ສັງກັດຢູ່ໃນໂຄງປະກອບການຈັດຕັ້ງຂອງກະຊວງ ໃນການຄຸ້ມຄອງມະຫາພາກ,ມີຊື່ຫຍໍ້ເປັນພາສາລາວວ່າ:" **ກຍຂບ** "; ເປັນພາສາອັງກິດວ່າ: " Authority of Public Works and Transport Inspection " ຊຽນຫຍໍ້ເປັນພາສາອັງກິດວ່າ: " APTI ".

## <u>ມາດຕາ 2</u>: ທີ່ຕັ້ງ ແລະ ພາລະບົດບາດ (ຕໍ່)

ຂະແໜງກວດກາ ຍທຂ ຂັ້ນທ້ອງຖິ່ນ ສັງກັດຢູ່ໃນໂຄງປະກອບການຈັດຕັ້ງ ຂອງພະແນກ ຍທຂ ແຂວງ ແລະ ນະຄອນຫລວງ ມີຖານະທຽບເທົ່າກັບຂະແໜງການອື່ນໆຂອງພະແນກ ຍທຂ, ມີຊື່ຫຍໍ້ເປັນພາສາລາວວ່າ " ຂຍຂບ "; ເປັນພາສາອັງກິດວ່າ" Sector of Public Works and TransportInspection";ຊຽນຫຍໍ້ເປັນພາສາອັງກິດວ່າ:"SPTI "

ມີພາລະບົດບາດໃນການດຳເນີນການຄຸ້ມຄອງ,ຄວບຄຸມກວດກາການຂົນສົ່ງທາງບົກ, ກວດກາທາງຫລວງ, ການກໍ່ສ້າງ ແລະ ປຸກສ້າງ ໃນຂອບເຂດທົ່ວປະເທດ.

## ໝວດທີ II ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 4. ຂອບເຂດສິດ**

ກອງກວດກາໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນສູນກາງ ແລະ ຂະແໜງກວດກາໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນທ້ອງຖິ່ນ ມີສິດໜ້າທີ່ຕົ້ນຕໍດັ່ງນີ້:

1.ສັ່ງໃຫ້ລົດວິສາຫະກິດຂົນສົ່ງ ແລະ ລົດຂົນສົ່ງສະເພາະທັງພາຍໃນ ແລະ ຕ່າງປະເທດ ທີ່ເຂົ້າມາເຄື່ອນໄຫວຢູ່ໃນ ສປປ ລາວ ຢຸດຊົ່ວຄາວ ເພື່ອກວດກາສະພາບເຕັກນິກຂອງລົດ, ເອກະສານປະຈຳລົດ, ເອກະສານກຳກັບສິນຄ້າ, ສັນຍາຂົນສົ່ງ, ເອກະສານຂອງຜູ້ຂັບຂີ່, ຈຳນວນສິນຄ້າ ແລະ ຜູ້ໂດຍສານ;

## ໝວດທີ II ໜ້າທີ່ ແລະ ຂອບເຂດສິດ(ຕໍ່)

2.ສັ່ງໃຫ້ເຈົ້າຂອງລົດ ຫລືຜູ້ຂັບລົດຂົນສົ່ງຮັບຜິດຊອບໃນການແກ້ໄຂຕໍ່ວັດຖຸ, ເຄື່ອງຂອງ ຫລືສິນຄ້າທີ່ມີນ້ຳໜັກ ແລະຂະໜາດເກີນພ້ອມທັງປັບໃໝຕາມລະບຽບການ ຈຶ່ງອະນຸຍາດໃຫ້ແລ່ນລົດຕໍ່ໄປໄດ້;

3. ແນະນຳ, ຕັກເຕືອນ, ສຶກສາອົບຮົມ ແລະ ປັບໃໝ ບຸກຄົນ ຫລື ການຈັດຕັ້ງ ທີ່ລະເມີດລະບຽບກົດໝາຍ ກ່ຽວຂ້ອງ

4. ປະສານສົມທົບກັບບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອແກ້ໄຂສິ່ງກີດຂວາງ ຢູ່ຕາມເສັ້ນທາງ ແລະ ຢູ່ໃນຂອບເຂດສະຫງວນຂອງທາງທີ່ກີດຂວາງການະລາຈອນທາງບົກ ແລະມີຄວາມສ່ຽງພາໃຫ້ເກີດອຸປະຕິເຫດຕາມເສັ້ນທາງ;

5. ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງໃນການດຳເນີນຄະດີ ຫລື ຕິດຕາມບຸກຄົນ ທີ່ລະເມີດລະບຽບກົດໝາຍກ່ຽວກັບການຂົນສົ່ງທາງບົກ, ການຈະລາຈອນທາງບົກ , ກົດໝາຍວ່າດ້ວຍ ທາງຫຼວງ ແລະ ກົດໝາຍ ເຄຫະຜັງເມືອງ ມາດຳເນີນຄະດີຕາມລະບຽບກົດໝາຍດັ່ງກ່າວ;

6. ສະເໜີປັບປຸງພາລະບົດບາດ,ໜ້າທີ່ແລະຄວາມຮັບຜິດຊອບຂອງຕົນ ລວມທັງລະບຽບການຕ່າງໆ ທີ່ເຫັນວ່າບໍ່ສອດຄ່ອງ;

7. ສະເໜີສ້າງຕັ້ງ, ປັບປຸງ ຫລື ຍົກເລີກກົງຈັກການຈັດຕັ້ງ ແລະ ຕຳແໜ່ງງານທີ່ຂຶ້ນກັບສິດຄຸ້ມຄອງ ຂອງຕົນ;
8. ສະເໜີແຕ່ງຕັ້ງ, ຍົກຍ້າຍ, ສັບຊ້ອນ, ເລື່ອນຊັ້ນ, ຍ້ອງຍໍ ປະຕິບັດວິໄນ ຕໍ່ພະນັກງານ,ລັດຖະກອນ ຂອງຕົນ ຕາມນະໂຍບາຍ ແລະ ລະບຽບກົດໝາຍຂອງລັດ;
9. ເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະຕ່າງປະເທດຕາມການອະນຸຍາດຂອງທ່ານລັດຖະມົນຕີ, ເຊີນຜູ້ຕາງໜ້າຂອງທຸກພາກສ່ວນທີ່ກ່ຽວຂ້ອງ ມາປະຊຸມປຶກສາຫາລື ແລະ ປະກອບຄຳເຫັນ ຕໍ່ວຽກງານ ຂອງຕົນ;
10. ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ກອງທຶນ, ເງິນຊ່ວຍເຫລືອ, ພາຫະນະ, ອຸປະກອນທີ່ລັດປະກອບໃຫ້ຢ່າງມີປະສິດທິຜົນ;
11. ປະຕິບັດສິດອື່ນໆຕາມການມອບໝາຍຂອງຂັ້ນເທິງ.

ໝວດທີ III ໂຄງປະກອບການຈັດຕັ້ງ.

ມາດຕາ 5. ໂຄງປະກອບກົງຈັກການຈັດຕັ້ງ.

5.1 ໂຄງປະກອບ ກົງຈັກການຈັດຕັ້ງຂອງ ກອງກວດກາ ໂຍທາທິການ ແລະຂົນສົ່ງທາງບົກຂັ້ນສູນກາງ ປະກອບມີ:

1. ພະແນກ ຈັດຕັ້ງ ແລະ ບໍລິຫານ.
2. ພະແນກ ແຜນການ-ງົບປະມານ ແລະ ສະຖິຕິ.
3. ພະແນກ ກວດກາການຂົນສົ່ງທາງບົກ.
4. ພະແນກ ເຕັກນິກ ແລະ IT.
5. ພະແນກ ນິຕິກຳ ແລະ ກົດໝາຍ
6. ພະແນກ ກວດກາ ພັກ-ລັດ

5.2 ໂຄງປະກອບ ກົງຈັກການຈັດຕັ້ງຂອງ ຂະແໜງກວດກາໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນທ້ອງຖິ່ນ ປະກອບມີ:

1. ໜ່ວຍງານຈັດຕັ້ງ - ບໍລິຫານ ແລະ ງົບປະມານ;
2. ໜ່ວຍງານ ສະຖິຕິ - ແຜນການ, ກົດໝາຍ
3. ໜ່ວຍງານ ເຕັກນິກສ້ອມແປງ ແລະ IT
4. ໜ່ວຍງານ ກວດກາການຂົນສົ່ງທາງບົກ;

<u>ມາດຕາ 6</u>: ໂຄງປະກອບບຸກຄະລາກອນ

6.1 ຂັ້ນສູນກາງ.

ຫົວໜ້າກອງ 1 ທ່ານ ມີຖານະທຽບເທົ່າຫົວໜ້າກົມ ຫລື ມີຕໍາແໜ່ງບໍລິຫານປະເພດ 2, ຊຶ່ງໄດ້ຮັບ ການແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ຈາກທ່ານລັດຖະມົນຕີ.

ຫົວໜ້າກອງ ມີຄວາມຮັບຜິດຊອບໂດຍກົງຕໍ່ລັດຖະມົນຕີ ວ່າການ.

ຫົວໜ້າກອງ ເປັນຜູ້ລົງລາຍເຊັນ ເອກະສານຕ່າງໆຂອງ ກອງ, ກໍລະນີຕິດຂັດ ຫົວໜ້າກອງ ຕ້ອງມອບສິດເປັນລາຍ ລັກອັກສອນເປັນການຊົ່ວຄາວໃຫ້ຮອງຫົວໜ້າກອງ.

ກອງກວດກາຂັ້ນສູນກາງ ຍັງມີຮອງຫົວໜ້າກອງ ຈໍານວນໜຶ່ງມີຖານະທຽບເທົ່າຮອງຫົວໜ້າກົມ, ເຊິ່ງໄດ້ຮັບ ການແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ຈາກທ່ານລັດຖະມົນຕີ.

ຮອງຫົວໜ້າກອງ ມີໜ້າທີ່ຊ່ວຍຫົວໜ້າ ໃນການຊີ້ນໍາ-ນໍາ ພາວຽກງານລວມຂອງກອງ ແລະ ລົງເລິກຄວາມບຜິດຊອບ ໃດໜຶ່ງ.

ກອງປະກອບມີ ຫົວໜ້າພະແນກຂອງກອງ, ຮອງຫົວ ໜ້າພະ ແລະ ພະນັກງານວິຊາການຈໍານວນໜຶ່ງຕາມຄວາມ ເໝາະສົມ .

6.2 ໂຄງປະກອບບຸກຄະລາກອນຂອງ <u>ຂັ້ນທ້ອງຖິ່ນ</u>.

ຫົວໜ້າຂະແໜງ 1 ທ່ານ ມີຖານະທຽບເທົ່າ ຫົວໜ້າຂະແໜງການອື່ນໆ,ຮອງຫົວໜ້າຂະແໜງ,ຫົວໜ້າຈຸງານ,ຮອງຫົວໜ້າຈຸງານ ແລະ ພະນັກງານວິຊາການ ຈຳນວນ

ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງເປັນຜູ້ແຕ່ງຕັ້ງ ແລະ ປົດຕຳແໜ່ງ

<u>ມາດຕາ 7</u>: ໜ້າທີ່ຂອງບັນດາພະແນກ ຂອງກອງກວດກາໂຍທາທິການ ແລະຂົນສົ່ງທາງບົກ <u>ຂັ້ນສູນກາງ</u>

7.1 ໜ້າທີ່ຂອງພະແນກຈັດຕັ້ງ ແລະ ບໍລິຫານ
7.2 ໜ້າທີ່ຂອງພະແນກ ແຜນການ-ງົບປະມານ ແລະ ສະຖິຕິ
7.3 ໜ້າທີ່ຂອງ ພະແນກ ກວດກາການຂົນສົ່ງທາງບົກ:
7.4 ໜ້າທີ່ຂອງພະແນກ ເຕັກນິກ ແລະ IT:
7.5 ໜ້າທີ່ຂອງພະແນກ ນິຕິກຳ ແລະ ກົດໝາຍ:
7.6. ໜ້າທີ່ຂອງພະແນກກວດກາພັກ-ລັດ:

<u>ມາດຕາ 8:</u> ໜ້າທີ່ຂອງພ່ວຍກວດກາການຂົນສົ່ງ ທາງບົກ <u>ຂັ້ນທ້ອງຖິ່ນ</u>

8.1.ໜ້າທີ່ຂອງໜ່ວຍງານຈັດຕັ້ງ-ບໍລິຫານ ແລະ ງົບປະມານ:

8.2.ໜ້າທີ່ຂອງໜ່ວຍງານ ສະຖິຕິ-ແຜນການ ແລະ ກົດໝາຍ:

8.3.ໜ້າທີ່ຂອງໜ່ວຍງານເຕັກນິກສ້ອມແປງ ແລະ IT:

8.4.ໜ້າທີ່ຂອງໜ່ວຍງານກວດກາການຂົນສົ່ງທາງບົກ:

<u>ໝວດທີ V</u> ລະບອບແບບແຜນວິທີເຮັດວຽກ

<u>ມາດຕາ 9:</u> ການເຄື່ອນໄຫວວຽກງານຂອງກອງ ກວດກາ ໂຍທາທິການ ແລະຂົນສົ່ງ ຂັ້ນສູນກາງ ແລະ ທ້ອງຖິ່ນ

<u>ມາດຕາ 10:</u> ເຄື່ອງແບບ, ເຄື່ອງໝາຍຂັ້ນ, ກາ ໝາຍ ແລະ ຕາປະທັບ

ໝວດທີ VI ບົດບັນຍັດສຸດທ້າຍ.

ມາດຕາ 11: ການຈັດຕັ້ງປະຕິບັດສະເໜີບັນດາກະຊວງ, ອົງການທຽບເທົ່າກະຊວງ,ບັນດາແຂວງ, ນະຄອນຫລວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງ ສະບັບ ນີ້ ໃຫ້ໄດ້ຮັບຜົນດີ.

ມາດຕາ 12: ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີວ່າການ**

# ຂໍຂອບໃຈ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ເລກທີ________/ ຍທຂ

ນະຄອນຫລວງວຽງຈັນ, ວັນທີ__________

# ຂໍ້ຕົກລົງ

## ວ່າດ້ວຍການກໍານົດເຄື່ອງແບບ, ເຄື່ອງໝາຍຊັ້ນ, ກາໝາຍ ແລະ ຕາປະທັບ ຂອງກອງກວດກາໂຍທາທິການ ແລະ ຂົນສົ່ງທາງບົກ

- ອີງຕາມດໍາລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 373/ນຍ, ລົງວັນທີ 22 ຕຸລາ 2007 ວ່າດ້ວຍການຈັດຕັ້ງ ແລະເຄື່ອນໄຫວຂອງກະຊວງໂຍທາທິການ ແລະຂົນສົ່ງ;
- ອີງຕາມບົດປະກອບຄໍາເຫັນ ຂອງກະຊວງພາຍໃນ ສະບັບເລກທີ 15/ຫປຄ.ກພລ, ລົງວັນທີ 24 ຕຸລາ 2008.

ເພື່ອໃຫ້ກອງກວດກາໂຍທາທິການ ແລະ ຂົນສົ່ງທາງບົກ ທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ມີເຄື່ອງແບບ, ເຄື່ອງໝາຍຊັ້ນ, ກາໝາຍ ແລະ ຕາປະທັບ ທີ່ເປັນເອກະລັກ ແລະເໝາະສົມ ສໍາລັບນໍາໃຊ້ເຂົ້າໃນການປະຕິບັດໜ້າທີ່ວຽກງານທາງລັດຖະການ.

## ລັດຖະມົນຕີວ່າການກະຊວງໂຍທາທິການ ແລະຂົນສົ່ງ ອອກຂໍ້ຕົກລົງດັ່ງຕໍ່ໄປນີ້:

**ມາດຕາ 1.** ອະນຸມັດໃຫ້ກອງກວດກາໂຍທາທິການ ແລະຂົນສົ່ງທາງບົກ ທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ມີເຄື່ອງແບບ, ເຄື່ອງໝາຍຊັ້ນ, ກາໝາຍ ແລະຕາປະທັບ ຕາມຮູບແບບດັ່ງຕໍ່ໄປນີ້:

**ກ. ເຄື່ອງແບບ:**

ເຄື່ອງແບບຂອງກອງກວດກາໂຍທາທິການ ແລະຂົນສົ່ງທາງບົກ ທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ມີຮູບແບບ ແລະ ສີສັນຢ່າງດຽວກັນດັ່ງນີ້ :

1. ສົ້ງຂາຍາວ ຫຼື ສິ້ນ ສີຕັບໝູແກ່ ( ນໍ້າເບີ 340 );

2. ຊຸດສາກົນ ເສື້ອແຂນຍາວ ຫລື ສັ້ນ ສີຕັບໝູແກ່ ( ນ້ຳເບີ 340 );
3. ເສື້ອເຊີດ, ມີທະນູບ່າ, ມີສອງຖົງຝາປິດແຂນສັ້ນ ຫລື ແຂນຍາວ (ສີເຫລືອງແກ່ນ້ຳເບີ 456);
4. ກາລະວັດ ສີຕັບໝູແກ່ ( ນ້ຳເບີ 340 );
5. ໝວກສີຕັບໝູແກ່ ( ນ້ຳເບີ 340 );
6. ສາຍແອວສີດຳ;
7. ເກີບສີດຳ.

ຮູບແບບຕົວຢ່າງ:

1.












## ຂ. ເຄື່ອງໝາຍຊັ້ນ

ເຄື່ອງໝາຍຊັ້ນຂອງກອງກວດກາໂຍທາທິການ ແລະຂົນສົ່ງທາງບົກ ທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ເປັນຮູບດາວ ແລະເປັນຂີດຕິດຢູ່ເທິງທະນູບ່າ ຊຶ່ງສົມທຽບຕາມຕຳແໜ່ງຂອງລັດຖະກອນ, ມີຮູບແບບ ແລະສີສັນຢ່າງດຽວກັນ.

ຮູບແບບຕົວຢ່າງ :

**ຫົວໜ້າກອງກວດກາ**
(ຕຳແໜ່ງ ບໍລິຫານປະເພດ 2)



**ຮອງຫົວໜ້າກອງກວດກາ**
(ຕຳແໜ່ງ ບໍລິຫານປະເພດ 3)



ຫົວໜ້າພະແນກ ຂອງກອງກວດກາ
ຫລື ຮອງພະແນກ ຍທຂ ແຂວງ ຜູ້ຊີ້ນຳວຽກກວດກາ
(ຕຳແໜ່ງບໍລິຫານປະເພດ 4)



ຮອງຫົວໜ້າພະແນກ ຂອງກອງກວດກາ
ຫລື ຫົວໜ້າຂະແໜງກວດກາ ຂອງພະແນກ ຍທຂ
(ຕຳແໜ່ງບໍລິຫານປະເພດ 5)



ຫົວໜ້າໜ່ວຍງານ ຂອງກອງກວດກາ
ຫລື ຮອງຫົວໜ້າຂະແໜງກວດກາ ຂອງພະແນກ ຍທຂ
( ຕຳແໜ່ງບໍລິຫານປະເພດ 6 )



ຮອງຫົວໜ້າໜ່ວຍງານ ຂອງກອງກວດກາ
ຫລື ຫົວໜ້າຈຸ ຂອງຂະແໜງກວດກາ ພະແນກ ຍທຂ
( ຕຳແໜ່ງບໍລິຫານປະເພດ 7 )



ຮອງຫົວໜ້າຈຸ ຂອງຂະແໜງກວດກາ ພະແນກ ຍທຂ
( ຕຳແໜ່ງບໍລິຫານປະເພດ 8 )



ວິຊາການ ຂອງກອງ ຫລື ຂະແໜງກວດກາ
ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ



**ຄ. ກາໝາຍຕ່າງໆ**

ກອງກວດກາໂຍທາທິການ ແລະ ຂົນສົ່ງທາງບົກ ທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ມີກາໝາຍຫລາຍອັນ, ມີທັງອັນທີ່ໃຊ້ຮ່ວມກັນ ແລະມີທັງອັນທີ່ເປັນຂອງໃຜລາວດັ່ງນີ້ :

**1. ມີກາຕິດຄໍເສື້ອ**

ຂັ້ນສູນກາງ ແລະ ທ້ອງຖິ່ນ

**ຂັ້ນສູນກາງ** **ຂັ້ນທ້ອງຖິ່ນ**

<u>ຮູບແບບ 1</u>






ຮູບແບບ 2




ຮູບແບບ 3




ຮູບແບບ 4



2. ມີກາໝາຍເປັນຮູບສັນຍາລັກຂອງກອງຕິດຢູ່ແຂນເສື້ອດ້ານຊ້າຍເບື້ອງເທິງ

3. ມີກາໝາຍເປັນຮູບຕົວອັກສອນທີ່ບອກໃຫ້ຮູ້ວ່າເປັນເຈົ້າໜ້າທີ່ກວດກາ ໂຍທາທິການ ແລະ ຂົນສົ່ງ ທາງບົກ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ

1. ມີກາໝາຍຕຳແໜ່ງ ຫ້ອຍຢູ່ກະດຸມຝາປິດຖົງເສື້ອເບື້ອງຊ້າຍ

ຮູບແບບຕົວຢ່າງ :

ກາຫມາຍຕິດຖົງເສື້ອຫົວຫນ້າກອງກວດກາ
ໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນສູນກາງ




ກາຫມາຍຕິດຖົງເສື້ອຮອງຫົວໜ້າກອງກວດກາ
ໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນສູນກາງ




ກາໝາຍຕິດຖົງເສື້ອຫົວໜ້າຂະແໜງກວດກາ
ໂຍທາທິການ ແລະ ຂົນສົ່ງທາງບົກ ຂັ້ນທ້ອງຖິ່ນ




ກາຫມາຍຕິດຖົງເສື້ອຮອງຫົວໜ້າຂະແໜງກວດກາ
ໂຍທາທິການ ແລະ ຂົນສົ່ງ ຂັ້ນທ້ອງຖິ່ນ




## ໑. ຕາປະທັບ

ກອງກວດກາໂຍທາທິການ ແລະ ຂົນສົ່ງທາງບົກ ທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ພ້ອມດ້ວຍບັນດາຈຸງານຊັ່ງນ້ຳໜັກລົດບັນທຸກ ປະຈຳສະຖານີຕ່າງ ມີຕາປະທັບຂອງຕົນເອງ.

ຮູບແບບຕົວຢ່າງ :

* ຕາປະທັບຂອງກອງກວດກາໂຍທາທິການ ແລະຂົນສົ່ງທາງບົກ ຂັ້ນສູນກາງ




* ຕາປະທັບຂອງຂະແໜງກວດກາໂຍທາທິການ ແລະຂົນສົ່ງທາງບົກ ຂັ້ນທ້ອງຖິ່ນ



✳ ກາປະທັບຂອງໜ່ວຍງານຊັ່ງນໍ້າໜັກລົດບັນທຸກປະຈໍາສະຖານີຕ່າງໆ













**ມາດຕາ 2. ການຈັດຕັ້ງປະຕິບັດ**

ສະເໜີບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາແຂວງ, ນະຄອນຫລວງ ແລະທຸກພາກສ່ວນທີ່ກ່ຽວຂ້ອງຮັບຮູ້ແລະໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 3. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ບັນດາຂໍ້ກໍານົດ ແລະລະບຽບການທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີວ່າການ**

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ກົມຂົນສົ່ງ

**ສະເໜີ**
**ເຄື່ອງແບບ, ເຄື່ອງໝາຍຊັ້ນ, ກາໝາຍ ແລະ ຕາປະທັບຂອງກອງກວດກາການຂົນສົ່ງທາງບົກ**

ສະເໜີໂດຍ: ທ່ານ ວຽງສະຫັວດ ສີພັນດອນ
ຫົວໜ້າກົມຂົນສົ່ງ

## ຂໍ້ຕົກລົງ
ວ່າດ້ວຍການກໍານົດເຄື່ອງແບບ, ເຄື່ອງໝາຍຊັ້ນ, ກາໝາຍ ແລະ ຕາປະທັບ ຂອງກອງກວດກາການຂົນສົ່ງທາງບົກ

- ອີງຕາມດໍາລັດຂອງນາຍຍົກລັດຖະມົນຕີສະບັບເລກທີ່373/ນຍ,ລົງວັນທີ 22 ຕຸລາ 2007 ວ່າດ້ວຍການຈັດຕັ້ງ ແລະເຄື່ອນໄຫວຂອງກະຊວງໂຍທາທິການ ແລະຂົນສົ່ງ;

- ອີງຕາມບົດປະກອບຄໍາເຫັນ ຂອງທະບວງການປົກຄອງ ແລະຄຸ້ມຄອງລັດຖະກອນສະບັບເລກທີ 15/ທປຄ.ກພລ, ລົງວັນທີ 24 ຕຸລາ 2008.

**ລັດຖະມົນຕີວ່າການກະຊວງໂຍທາທິການ ແລະຂົນສົ່ງ ອອກຂໍ້ຕົກລົງດັ່ງຕໍ່ໄປນີ້:**

**ມາດຕາ 1.** ກອງກວດກາການຂົນສົ່ງທາງບົກ ທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ມີ ເຄື່ອງແບບ, ເຄື່ອງໝາຍຊັ້ນ, ກາໝາຍ ແລະຕາປະທັບ ຕາມຮູບແບບດັ່ງຕໍ່ໄປນີ້:

# ກ. ເຄື່ອງແບບ



## ຂ. ເຄື່ອງໝາຍຊັ້ນ

- ຫົວໜ້າ(ກົມ) ກອງກວດກາການຂົນສົ່ງທາງບົກຂັ້ນສູນກາງ
- ( ຕຳແໜ່ງບໍລິຫານປະເພດ 3 )



- ຮອງຫົວໜ້າພະແນກຂອງກົມ (ຫຼືຫົວໜ້າຂະແນງ ຂອງແຂວງ ຂັ້ນທ້ອງຖິ່ນ ( ຕຳແໜ່ງບໍລິຫານປະເພດ 7 )
- 



## ເຄື່ອງໝາຍຊັ້ນ

- ຫົວໜ້າ (ຮອງ)ກອງກວດກາການຂົນສົ່ງທາງບົກຂັ້ນທອງຖິ່ນ ຫຼື
- ຮອງຫົວໜ້າກອງກວດກາການຂົນສົ່ງທາງບົກຂັ້ນສູນກາງ (ຕຳແໜ່ງບໍລິຫານ

ປະເພດ 4 )



ວິຊາການຂອງກອງກວດກາການຂົນສົ່ງທາງບົກຂັ້ນສູນກາງແລະທ້ອງຖິ່ນ(ຊັ້ນສູງ,ະລິນຍາຕີ,ປະລິນຍາໂທ ແລະປະລິນຍາເອກ )



## ເຄື່ອງໝາຍຊັ້ນ

- ຮອງຫົວໜ້າຂະແໜງຂອງແຂວງກອງກວດກາການຂົນສົ່ງທາງບົກ ຂັ້ນ
- ສູນກາງ ຫຼື ທາງບົກຂັ້ນທ້ອງຖິ່ນ

(ຕໍາແໜ່ງບໍລິຫານປະເພດ 5)



- ວິຊາການ ຂອງກອງກວດກາການຂົນສົ່ງທາງບົກ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ( ຊັ້ນກາງ )



## ເຄື່ອງໝາຍຊັ້ນ

- ຕໍາແໜ່ງບໍລຫານປະເພດ 6



ພະນັກງານຮັບໃຊ້



ຄ. ກາໝາຍຕ່າງໆ
1. ມີກາຕິດຄໍເສື້ອ

□ ຂັ້ນສູນກາງ




□ ຂັ້ນທ້ອງຖິ່ນ




2. ມີກາໝາຍເປັນຮູບສັນຍາລັກຂອງກອງຕິດຢູ່ແຂນເສື້ອ
ດ້ານຊ້າຍເບື້ອງເທິງ



## 3. ມີກາໝາຍເປັນຮູບຕົວອັນສອນທີ່ບອກໃຫ້ຮູ້ວ່າເປັນເຈົ້າໜ້າທີ່ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ

ຂັ້ນສູນກາງ ແລະ ທ້ອງຖິ່ນ




## 4. ມີກາໝາຍຕຳແໜ່ງ ຫ້ອຍຢູ່ກະດຸມຝາປິດຖົງເສື້ອເບື້ອງຊ້າຍ

| ກາຫມາຍຕິດຖົງເສື້ອທົວຫນ້າກອງ ຂັ້ນສູນກາງ | ກາຫມາຍຕິດຖົງເສື້ອຫົວໜ້າກອງ ຂັ້ນທ້ອງຖິ່ນ |
|---|---|



## 4. ມີກາໝາຍຕຳແໜ່ງ ຫ້ອຍຢູ່ກະດຸມຝາປິດຖົງເສື້ອເບື້ອງຊ້າຍ

| ກາໝາຍຕິດຖົງເສື້ອຮອງຫົວໜ້າກອງ ຂັ້ນສູນກາງ | ກາຫມາຍຕິດຖົງເສື້ອຮອງຫົວໜ ້າກອງກວດກາທ້ອງຖິ່ນ |
|---|---|




## ໑. ຕາປະທັບ

✳ ຂັ້ນສູນກາງ




✳ ຂັ້ນທ້ອງຖິ່ນ



## * ຕາປະທັບຂອງໜ່ວຍງານຊັ່ງນ້ຳໜັກລົດບັນທຸກປະຈຳສະຖານີຕ່າງໆ




**ມາດຕາ 2. ການຈັດຕັ້ງປະຕິບັດ**

ສະເໜີບັນດາກະຊວງ,ອົງການທຽບເທົ່າກະຊວງ, ບັນດາແຂວງ, ນະຄອນຫລວງ ແລະທຸກພາກສ່ວນທີ່ກ່ຽວຂ້ອງຮັບຮູ້ ແລະໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 3. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ບັນດາຂໍ້ກຳນົດ ແລະລະບຽບການທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີວ່າການ**